**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

******************

ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ ເລກທີ 1040/ຖວ

# ກົດລະບຽບ
# ຄຸ້ມຄອງຟີມຮູບເງົາ ແລະ ວີດີໂອກາແຊັດ

--------------------

*- ປະຕິບັດຕາມ ມະຕິກົມການເມືອງສູນກາງພັກ ກ່ຽວກັບການເພີ່ມທະວີການນຳພາຂອງພັກ ແລະ ການຄຸ້ມຄອງລັດຕໍ່ສື່ມວນຊົນໃນໄລຍະໃໝ່ ສະບັບເລກທີ 36/ກມສມ, ລົງວັນທີ 19 ມິຖຸນາ 1993, ປະຕິບັດຕາມ ມາດຕາ 19 ຂອງ ລັດຖະທຳມະນູນ, ມາດຕາ 59 ແລະ 127 ຂອງກົດໝາຍອາຍາ ແຫ່ງ ສປປ ລາວ.*

ເພື່ອຄຸ້ມຄອງຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ທາງດ້ານການຈໍລະຈອນບໍລິການຟີມຮູບເງົາ ແລະ ວີດີໂອກາແຊັດ ທີ່ຈໍລະຈອນເຄື່ອນໄຫວບໍລິການຮັບໃຊ້ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍບ້ານເມືອງ.

**ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ ຈຶ່ງໄດ້ອອກລະບຽບຄຸ້ມຄອງເນື້ອໃນຟີມຮູບເງົາ ວີດີໂອກາແຊັດ ດັ່ງນີ້:**

## ພາກທີໜຶ່ງ
## ຫຼັກການລວມ

**ມາດຕາ 1:** ຟີມຮູບເງົາ, ກາແຊັດ, ວີດີໂອ, ເລື່ອງ, ສາລະຄະດີ ແມ່ນຜະລິດຕະພັນດ້ານສິລະປະທີ່ລວມຍອດ ທັງເປັນພາຫະນະໃນການໂຄສະນາສຶກສາອົບຮົມຂອງທຸກຊັ້ນຄົນ, ເຜີຍແຜ່ໄວໄດ້ງ່າຍ. ຖ້າບໍ່ມີການຄຸ້ມຄອງຫຼື ຄຸ້ມຄອງບໍ່ດີຈະເປັນອັນຕະລາຍໃຫ້ແກ່ແນວຄິດ ແລະ ວັດທະນະທຳ. ຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງປະເທດຊາດໄດ້ ໂດຍສະເພາະແມ່ນຄົນຢູ່ໃນໄວໜຸ່ມ ແລະ ເຍົາວະຊົນ.

**ມາດຕາ 2:** ພົນລະເມືອງລາວ ແລະ ຊາວຕ່າງປະເທດທີ່ມາອາໄສ, ມາປະຈຳການ, ມາເຮັດວຽກງານຊົ່ວຄາວ, ມາຢ້ຽມຢາມ ແລະ ມາທ່ອງທ່ຽວ ຢູ່ ສປປ ລາວ ລ້ວນແຕ່ຕ້ອງເຄົາລົບ ແລະ ປະຕິບັດລະບຽບຄຸ້ມຄອງຟິມຮູບເງົາ ແລະ ວີດີໂອກາແຊັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 3:** ລັດ ສປປ ລາວ ອຳນວຍຄວາມສະດວກ ແລະ ເຄົາລົບ ສິດເສລີພາບ ຂອງ ພົນລະເມືອງລາວ ແລະ ຊາວຕ່າງປະເທດທີ່ມາອາໄສ ຢູ່ ສປປ ລາວ ໃນການເຄື່ອນໄຫວຈໍລະຈອນ ແລະ ນຳໃຊ້ຜະລິດຕະພັນດ້ານຟິມຮູບເງົາ ແລະ ວີດີໂອກາແຊັດ ບົນພື້ນຖານຖືກຕ້ອງຕາມລະບຽບກົດໝາຍ ແລະ ໄດ້ຮັບອະນຸຍາດຈາກອົງການວິຊາການທີ່ກ່ຽວຂ້ອງ.

## ພາກທີສອງ
## ລະບຽບການຈັດຕັ້ງເຄື່ອນໄຫວ
## ຟິມຮູບເງົາ ແລະ ວີດີໂອກາແຊັດ

**ມາດຕາ 4:** ບຸກຄົນ ແລະ ອົງການຈັດຕັ້ງ ຂອງລັດ-ເອກະຊົນ ທີ່ມີຈຸດປະສົງຢາກເຄື່ອນໄຫວດຳເນີນທຸລະກິດການຈຳໜ່າຍບໍລິການຟິມຮູບເງົາ, ວີດີໂອກາແຊັດເລື່ອງ, ສາລະຄະດີ ແລະ ຂ່າວ ຕ້ອງຂື້ນທະບຽນຂໍອະນຸຍາດ ຈາກ ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ ແລະ ກະຊວງການເງິນ, ຖ້າຢູ່ທ້ອງຖິ່ນຕ້ອງຂື້ນທະບຽນຂໍອະນຸຍາດຈາກ ພະແນກຖະແຫຼງຂ່າວ ແລະ ວັດທະນະທຳ ແລະ ພະແນກການເງິນແຂວງ - ກຳແພງນະຄອນ ຢ່າງຖືກຕ້ອງ ຈຶ່ງມີສິດດຳເນີນທຸລະກິດໄດ້ຢ່າງເປັນທາງການ.

**ມາດຕາ 5:** ບຸກຄົນ ແລະ ອົງການຈັດຕັ້ງຂອງລັດ-ເອກະຊົນທີ່ມີຈຸດປະສົງສ້າງຟິມຮູບເງົາ ແລະ ວີດີໂອກາແຊັດ ຕ້ອງສ່ອງແສງໃຫ້ເຫັນໄດ້ເນື້ອໃນຊາດ, ປະຊາຊົນ ແລະ ກ້າວໜ້າ, ທັງສອດຄ່ອງກັບວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ມີເນື້ອໃນສຶກສາອົບຮົມນ້ຳໃຈຮັກຊາດ, ນ້ຳໃຈສາມັກຄີປອງດອງຊາດ, ປຸກລະດົມຂະບວນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດ ພາຍໃຕ້ການນຳພາຂອງພັກປະຊາຊົນ ປະຕິວັດລາວ. ບັນດາເນື້ອໃນຈະສ້າງຟິມຮູບເງົາ ແລະ ວີດີໂອກາແຊັດທຸກເລື່ອງ ກ່ອນຈະເອົາໄປຈໍລະຈອນເພື່ອບໍລິການປະຊາຊົນລາວບັນດາເຜົ່າ ຫຼື ສົ່ງໄປຕ່າງປະເທດ ຕ້ອງໄດ້ຜ່ານການກວດກາເນື້ອໃນ ຈາກ ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ, ຖ້າຢູ່ທ້ອງຖິ່ນຕ້ອງຜ່ານ ພະແນກຖະແຫຼງຂ່າວ ແລະ ວັດທະນະທຳແຂວງ-ກຳແພງນະຄອນ.

**ມາດຕາ 6:** ບັນດາຟິມຮູບເງົາ, ວີດີໂອກາແຊັດເລື່ອງ ແລະ ສາລະຄະດີທີ່ນຳມາຈາກຕ່າງປະເທດເພື່ອຈຳໜ່າຍບໍລິການຢູ່ໃນ ສປປ ລາວ ຕ້ອງມີເນື້ອໃນສ່ອງແສງໃຫ້ເຫັນຄວາມຮັກຊາດ, ຮັກການສຶກສາຮ່ຳຮຽນ, ມີຄວາມສາມັກຄີ, ມີຄວາມດຸໝັ່ນ, ສົ່ງເສີມວັດທະນະທຳ, ຕ້ານຕໍ່ການກົດຂີ່ຂູດຮີດ, ຕ້ານການກໍ່ສົງຄາມ, ບໍ່ຂັດຕໍ່ແນວທາງນະໂຍບາຍຂອງ

ພັກ-ລັດ, ບໍ່ຕ້ານຕໍ່ລະບອບການປົກຄອງຂອງ ສປປ ລາວ, ບໍ່ຝືນຕໍ່ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງລາວ, ບໍ່ສ້າງຄວາມຂັດແຍ່ງພາຍໃນຊາດ ແລະ ບໍ່ແຕະຕ້ອງເຖິງຄວາມສາມັກຄີກັບປະເທດເພື່ອນມິດໃນໂລກ.

**ມາດຕາ 7:** ບຸກຄົນ, ອົງການຈັດຕັ້ງຂອງລັດ ແລະ ເອກະຊົນທີ່ມີຈຸດປະສົງຈັດຕັ້ງເປັນບໍລິສັດນຳເຂົ້າ-ສົ່ງອອກຟິມຮູບເງົາ ແລະ ວີດີໂອກາແຊັດ, ບໍລິສັດສ້າງຟິມຮູບເງົາ ແລະ ວີດີໂອກາແຊັດ, ບໍລິສັດແປ ແລະ ພາກພາສາລາວໃສ່ຟິມຮູບເງົາ ແລະ ວີດີໂອກາແຊັດ, ສ້າງໂຮງສາຍຮູບເງົາ ແລະ ວີດີໂອກາແຊັດ, ສ້າງໜ່ວຍສາຍຮູບເງົາ ແລະ ວີດີໂອກາແຊັດເຄື່ອນທີ່ ຕ້ອງໄດ້ຂໍອະນຸຍາດ ຈາກ ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ ຈຶ່ງມີສິດເຄື່ອນໄຫວດຳເນີນກິດຈະການດ້ານຟິມຮູບເງົາ ແລະ ວີດີໂອໄດ້ຢ່າງຖືກຕ້ອງຕາມກົດໝາຍ.

## ພາກທີສາມ
## ລະບຽບນຳເຂົ້າ-ສົ່ງອອກ ແລະ ການຈຳໜ່າຍບໍລິການ ຟິມຮູບເງົາ-ວີດີໂອກາແຊັດ ຢູ່ ສປປ ລາວ

**ມາດຕາ 8:** ບັນດາຟິມຮູບເງົາ, ວີດີໂອກາແຊັດເລື່ອງ ແລະ ສາລະຄະດີທີ່ຈະນຳເຂົ້າ ແລະ ສົ່ງອອກ ສປປ ລາວ ຕ້ອງໄດ້ຮັບອະນຸຍາດນຳເຂົ້າ-ສົ່ງອອກ ແລະ ກວດກາເນື້ອໃນຈາກ ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ, ຖ້າຢູ່ທ້ອງຖິ່ນຕ້ອງໄດ້ຮັບອະນຸຍາດ ແລະກວດກາເນື້ອໃນ ຈາກ ພະແນກຖະແຫຼງຂ່າວ ແລະ ວັດທະນະທຳ ແຂວງ - ກຳແພງນະຄອນ.

**ມາດຕາ 9:** ບັນດາຟິມຮູບເງົາ, ວີດີໂອກາແຊັດເລື່ອງ, ສາລະຄະດີ ທີ່ນຳເຂົ້າມາຈາກຕ່າງປະເທດ ກ່ອນຈະນຳອອກຈຳໜ່າຍບໍລິການຮັບໃຊ້ຢູ່ພາຍໃນ ສປປ ລາວ ຕ້ອງແປ ແລະ ພາກເປັນພາສາລາວ ຈຶ່ງຈະອະນຸຍາດນຳໄປຈຳໜ່າຍບໍລິການຮັບໃຊ້ປະຊາຊົນໂດຍທົ່ວໄປໄດ້. ຍົກເວັ້ນແຕ່ຟິມຮູບເງົາ ແລະ ວີດີໂອກາແຊັດດ້ານວິຊາການວິທະຍາສາດ-ເຕັກນິກ ແລະ ຮຽນພາສາຕ່າງປະເທດ ແຕ່ບໍ່ມີສິດນຳອອກໄປຈຳໜ່າຍບໍລິການຢູ່ພາຍໃນ ສປປ ລາວ ໄດ້. ຖ້າຫາກບໍ່ໄດ້ຮັບອະນຸຍາດຈາກອົງການກ່ຽວຂ້ອງ.

## ພາກທີສີ່
## ພັນທະຕໍ່ລັດ

**ມາດຕາ 10:** ບັນດາບຸກຄົນ, ອົງການຈັດຕັ້ງຂອງລັດ-ເອກະຊົນ ທີ່ເຄື່ອນໄຫວທຸລະກິດດ້ານຟິມຮູບເງົາ ແລະ ວີດີໂອກາແຊັດ ຈະຕ້ອງເສຍຄ່າທຳນຽມນຳເຂົ້າ-ສົ່ງອອກ ແລະ ການ

ກວດກາເນື້ອໃນຕາມລະບຽບການທີ່ທາງ ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ ໄດ້ກຳນົດອອກ.

**ມາດຕາ 11:** **ບັນດາຄ່າທຳນຽມ ແລະ ການກວດກາ ຟິມຮູບເງົາ ແລະ ວີດີໂອກາແຊັດ ມີຄື:**

1. ຄ່າກວດເນື້ອໃນຟິມຮູບເງົານຳເຂົ້າ 8.000 ກີບ/ເລື່ອງ
2. ຄ່າກວດເນື້ອໃນວີດີໂອກາແຊັດທີ່ເອົາເຂົ້າມາຈາກຕ່າງປະເທດ 3.000 ກີບ/ເລື່ອງ
3. ຄ່າຟິມຮູບເງົາສົ່ງອອກເລື່ອງໜຶ່ງ 5.000 ກີບ/ເລື່ອງ
4. ຄ່າກວດເນື້ອໃນຟິມຮູບເງົາທີ່ຜະລິດໃນປະເທດ 4.000 ກີບ/ເລື່ອງ
5. ຄ່າກວດເນື້ອໃນວີດີໂອກາແຊັດທີ່ຜະລິດພາຍໃນ 1.000 ກີບ/ເລື່ອງ

## ພາກທີຫ້າ
## ມາດຕະການຈັດຕັ້ງປະຕິບັດ

**ມາດຕາ 12:** ຫ້າມນຳເຂົ້າ ແລະ ຈຳໜ່າຍບໍລິການຟິມຮູບເງົາ ແລະ ວີດີໂອກາແຊັດທີ່ບໍ່ໄດ້ແປ ແລະ ພາກເປັນພາສາລາວ, ຟິມຮູບເງົາ ແລະ ວີດີໂອກາແຊັດລາມົກອານາຈານໂປ້ເປືອຍ, ຕ້ານຕໍ່ແນວທາງນະໂຍບາຍຂອງພັກ-ລັດ, ສົ່ງເສີມສົງຄາມ, ສົ່ງເສີມຢາເສບຕິດ, ງົມງວາຍ ແລະ ສ້າງຄວາມເສຍຫາຍ ໃຫ້ແກ່ວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດລາວ, ສ້າງຄວາມເສຍຫາຍເຖິງລະບອບການເມືອງ ແລະ ເສດຖະກິດ ຂອງ ສປປ ລາວ.

**ມາດຕາ 13:** ບຸກຄົນ ແລະ ອົງການຈັດຕັ້ງຂອງລັດ-ເອກະຊົນ ທີ່ຝ່າຝືນຕໍ່ກົດລະບຽບສະບັບນີ້ ຈະຕ້ອງຖືກປັບໄໝ ແລະ ລົງໂທດຕາມສະຖານໜັກ ຫຼື ເບົາ ທີ່ໄດ້ກຳນົດໄວ້ໃນ ມາດຕາ 59 ແລະ ມາດຕາ 127 ຂອງ ກົດໝາຍອາຍາ ແຫ່ງ ສປປລາວ.

**ມາດຕາ 14:** ກົດລະບຽບສະບັບນີ້ ມີຜົນບັງຄັບໃຊ້ຢ່າງເປັນທາງການ ນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

ວຽງຈັນ,ວັນທີ 27 / 9 / 1995

ລັດຖະມົນຕີ,

ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ

**ໂອສະກັນ ທຳມະເທວາ**

( ເຊັນ ແລະ ຕີຕາແລ້ວ )